# ເພງລາວ-ອັ່ງກິດ

# ຄຣິດສຕຽນ

# Lao-English Christian Songs

# ສາຣະບັນເພງ


ກົ້ງອອກໄປ..............................................17
ຂ້າຮັບການໄຖ່..........................................29
ຂ້າຮູ້ແນ່..................................................12
ຂອບຄຸນພຣະເຢຊູ.....................................23
ຄວາມປາຖນາ..........................................10
ຄອຍເຝົ້າຄອຍ.........................................27
ຈະຢູ່ເປັນສຸກ............................................26
ຈົ່ງອະທິຖານ..............................................7
ຈົ່ງສະແຫວງຫາ.......................................32
ຈັບມືກັນໄວ້.............................................20
ສະບາຍດີບໍ່................................................3
ເຊີນທ່ານທັງຫລາຍ....................................25
ເຊີນພຣະວິນຍານ........................................9
ຊີວິດເຮົາພຣະເຈົ້າຊົງສ້າງ...........................13
ຍິນດີ ຍິນດີ ຍິນດີ........................................1
ດວງໃຈເປຣມປຣີ.....................................14
ດູປ່າໄມ້..................................................19
ທັມມະຊາດແສນງາມ.................................24
ພຣະເຢຊູຊົງຮັກເຮົາ...................................22
ພຣະຄຸນພຣະເຈົ້າ........................................4
ພຣະເຢຊູຜູ້ເປັນຫົນທາງ................................6
ພຣະອົງຊົງສົມຄວນ...................................15
ພຣະເຈົ້າຜູ້ຊົງສ້າງ.....................................31
ພີ່ນ້ອງທັງຫລາຍ.......................................30
ໄຟ ໄຟ ໄຟ..............................................28
ມາສັຣເສີນພຣະຜູ້ເປັນເຈົ້າ...........................16
ເລີ່ມໃຫ້ຖືກ .............................................11
ໂລກເຮົາ.................................................33
ລາກ່ອນ..................................................34
ວັນນີ້ເປັນວັນ............................................18
ໜ້າຈະສັຣເສີນພຣະນາມ..............................5
ຮ້ອງຮາເລລູຢາ...........................................2
ຮ້ອງຮາເລລູຢາແດ່ພຣະເຈົ້າ...........................8
ເຮົາເປັນນຶ່ງໃນຄວາມຮັກ ............................21

## #1 ຍິນດີ ຍິນດີ ຍິນດີ

1. ຍິນດີ ຍິນດີ ຍິນດີ ທີ່ໃນວັນນີ້ໄດ້ມາພົບກັນ
   ໄດ້ເຫັນຊາວລາວເຜົ່າພັນ ໄດ້ມາພົບກັນເຮົາສຸກສັນຍິນດີ

2. ດວງໃຈຂ້າກໍແສນຊາບຊຶ້ງ ເມື່ອຄິດຖຶງເວລາພົບກັນ
   ຄຣິດສະຕຽນເຮົາຄວນສໍາພັນ (2 ເທື່ອ)
   ແລະຄວນຮັກກັນເໝືອນພຣະເຈົ້າເຢຊູ

3. ມື້ນີ້ນ້ອງສະບາຍດີຫລື? ມື້ນີ້ອ້າຍສະບາຍດີຫລື? ເບິ່ງຄື ຄື ລ້າເລີງສຸກໃຈ
   ຂໍໃຫ້ພຣະເຈົ້າຊົງອວຍພອນ (2 ເທື່ອ) ຈະນັ່ງຈະນອນຂໍໃຫ້ພອນເທມາ

4. ວັນນີ້ພວກເຮົາສຸກໃຈຈິງ ບໍ່ມີສິ່ງໃດມາປຽບປານ
   ເພາະບໍ່ໃດ້ພົບກັນເສັຽນານ (2 ເທື່ອ)
   ໃດ້ມາພົບກັນເຮົາສຸກສັນຍິນດີ
   ຍິນດີ ຍິນດີ ຍິນດ (3 ເທື່ອ)

## #2 ຮ້ອງຮາເລລູຢາ

1. ຮ້ອງຮາເລລູຢາ ສັນຣະເສີນພຣະນາມ
   ເພາະພຣະອົງຊົງຮັກເຮົາ ປະທານອົງພຣະບຸດຕາ
   ຜູ້ທີ່ຢູ່ໃນຄວາມມືດ ຫລືຢູ່ໃນແດນມະຈຸລາດ
   ຈະໄດ້ເຫັນຄວາມສະວ່າງ ສ່ອງລົງມານັ້ນເພື່ອເຮົາ

* ພຣະຄຣິດສເປັນຄວາມສະວ່າງ ສິດໄສຖ້າມກາງຄວາມມືດ
   ອົງສັນທິຣາດຈອມລາຊາ ອິມມານູເອັນ

   ຮ້ອງຮາເລລູຢາ ສັນຣະເສີນພຣະນາມ
   ເພາະພຣະອົງໄດ້ບັງເກີດ ຢູ່ໃນຮາງຍ້າເພື່ອເຮົາ

## #3 ສະບາຍດີບໍ່

ສະບາຍດີບໍ່ ທຸກ ໆ ຄົນ ສະບາຍດີບໍ່?
ມີຫຍັງບໍ່ ທີ່ທ່ານຕ້ອງການໃຫ້ຂ້າຊ່ອຍບໍ່?

ທຸກ ໆ ສິ່ງທີ່ຂ້າທຳໄດ້ ຂ້າຈະທຳດ້ວຍຄວາມເຕັມໃຈ
ສະບາຍດີບໍ່ ທຸກ ໆ ຄົນ ສະບາຍດີບໍ່?

## #4 ພຣະຄຸນພຣະເຈົ້າ

1. ພຣະຄຸນພຣະເຈົ້ານັ້ນແສນຊື່ນໃຈ ຊ່ວຍໄດ້ຄົນຊົ່ວຢ່າງຂ້າ
ຄັ້ງນຶ່ງໄດ້ຫລົງພຣະອົງຕາມຫາ ຕາບອດດຽວນີ້ເຫັນແລ້ວ

2. ພຣະຄຸນສອນໃຫ້ຂ້ານ້ອຍຢຳເກງ ເລັ່ງໃຫ້ຄວາມຊົ່ວຕ້ອງໜີ
ພຣະຄຸນອັນເລີດປະເສີດຍິ່ງໃຫຍ່ ບໍ່ມີໝູ່ມານໄດ້ໄຊ

3. ບ້ວງມານວາງໄວ້ທຸກໄພຫລາຍຢ່າງ ຕາມທາງຂ້ານ້ອຍພົ້ນແລ້ວ
ແຕ່ເພາະພຣະຄຸນຂ້ານ້ອຍປອດໄພ ພຣະອົງນຳຂ້ອຍເມືອບ້ານ

4. ພຣະເຈົ້າປະທານແຕ່ສິ່ງທີ່ດີ ພຣະທັມໃຫ້ມີຄວາມຫວັງ
ພຣະອົງຄຸ້ມຄອງປ້ອງກັນທຸກທີ່ ເມື່ອມີສິ່ງຊົ່ວບີທາ

5. ເມື່ອເຮົາໄດ້ໄປຢູ່ເມືອງສະວັນ ຊ້ານານນັບຫລາຍພັນປີ
ຍັງມີເວລາຮ້ອງເພັງສັຣເສີນ ເທົ່າກັນກັບເມື່ອເລີ່ມຕົ້ນ

## #5 ໜ້າຈະສັຣເສີນພຣະນາມພຣະເຈົ້າ

1. ໜ້າຈະສັຣເສີນພຣະນາມພຣະເຈົ້າ ໜ້າຈະສັຣເສີນພຣະນາມພຣະເຈົ້າ
ພຣະຄຸນຄວາມລອດອະນັນ ພຣະຄຣິດຕາຍເພື່ອຂ້າ

* ສັຣເສີນພຣະເຈົ້າ ສັຣເສີນພຣະເຈົ້າ ຮາເລລູຢາ
ສັຣເສີນພຣະເຈົ້າ ຮາເລລຸຢາ ສັຣເສີນພຣະເຈົ້າ ຮາເລລູຢາ ສັຣເສີນພຣະເຈົ້າ

## #6 ພຣະເຢຊູຜູ້ເປັນຫົນທາງ

1. ໂອພຣະເຢຊູຜູ້ເປັນຫົນທາງ ຄົນໃດໄດ້ເດີນຕິດຕາມຄົນນັ້ນບໍ່ຢ້ານຫຍັງເລີຍ
   ຍາມເຮົາຖືກໄພອັນຕະລາຍ ເຮົາກໍຫວັງມີຊັຍຈະໄດ້ເພິ່ງພຣະເຢຊູ

2. ໂອພຣະເຢຊູຜູ້ເປັນຄວາມຈິງ ຜູ້ໃດບໍ່ໄລລະຖິ້ມຜູ້ນັ້ນຈະເຖິງສະວັນ
   ມາເຖີດໜາພຣະອົງຍັງຄອງ ຖ້າພວກເຮົາພີ່ນ້ອງຜູ້ຕ້ອງກັບໃຈໃໝ່ເອີຍ

* ເມື່ອນຶ່ງສະຖານວິມານແດນໄກ ສະວັນນັ້ນງາມວິໄລ ພຣະອົງສ້າງໄວ້ເພື່ອເຮົາ
   ມາເຖີດມາຢ່າດ່ວນກັບໜີ ພຣະອົງເປັນຜູ້ທີ່ປານີແກ່ທ່ານທຸກຄົນ

3. ໂອພຣະເຢຊູຜູ້ເປັນຊີວິດ ຜູ້ໃດຫິວອ່ອນດວງຈິດ ຂໍໄດ້ຈາກພຣະເຢຊູ
   ພຣະອົງຈະປະທານຄວາມສຸກ ແກ່ຜູ້ທີ່ກັບໃຈ ຈະໄດ້ຊີວິດນິຣັນ

## #7 ຈົ່ງອະທິຖານ

1. ຈົ່ງເຝົ້າວອນອະທິຖານ ຢ່າໃຫ້ມານມີໂອກາດ
   ຈົ່ງເຊື່ອພຣະເຢຊູ (2 ເທື່ອ) ທ່ານຈະມີຊີວິດນິຣັນ (2 ເທື່ອ)

* ແຜ່ນດິນສະວັນປຽບຍິ່ງພິມມາຈັນ ຄົນມີປັນຍາຫ້າຄົນຕື່ມນ້ຳມັນ
   ຄົນໂງ່ຫ້າຄົນ ມີຕະກຽງບໍ່ມີນ້ຳມັນ (2 ເທື່ອ)

2. ໃນໃຈພ້ອມກາຍອ່ອນແອ ຢ່າຍອມແພ້ການທົດລອງ
   ພຣະຄຣິດເຈົ້າຈະມາ (2 ເທື່ອ) ໃນເວລາທີ່ທ່ານຫລັບນອນ (2 ເທື່ອ)

3. ຈົ່ງມາວອນອະທິຖານ ມານຊາຕານຍິ່ງຕົວຊົ່ນ
   ຈົ່ງຕື່ນແລະຣະວັງ (2 ເທື່ອ) ອະທິຖານອ້ອນວອນພຣະອົງ (2 ເທື່ອ)

## #8 ຮ້ອງຮາເລລູຢາແດ່ພຣະເຈົ້າ

ຮ້ອງຮາເລລູຢາແດ່ພຣະເຈົ້າ (2 ເທື່ອ) ຮ້ອງຮາເລລູຢາ (2 ເທື່ອ)
ຮ້ອງຮາເລລູຢາແດ່ພຣະເຈົ້າ

## #9 ເຊີນພຣະວິນຍານ

1. ເຊີນພຣະວິນຍານແຮ່ງຄວາມຮັກຍິ່ງໃຫຍ່ ຊົງເຄື່ອນໃຫວໃນເຮົາທຸກຄົນ
   ໃຫ້ເຕັມລົ້ນພາຍໃນສັນຕິສຸກອີ່ມເຕັມໃຈ
   ຂໍຊົງຄອບຄອງຄວາມຄິດແລະຊີວິດ ໃຫ້ເປັນຂອງພຣະອົງທຸກສິ່ງ
   ໂດຍພຣະວິນຍານບໍຣິສຸດເປັນຜູ້ຊົງນໍາ

* ພຣະເຢຊູ ໂອພຣະເຢຊູ ຊົງເຈີມຂ້າດ້ວຍໄຟ...
   ພຣະເຢຊູ ໂອພຣະເຢຊູ ຊົງເຈີມຂ້າດ້ວຍໄຟ.

## #10 ຄວາມປາຖນາ

1. ຈິດວິນຍານຂ້າກະຫາຍພຣະເຈົ້າ ດຸດດັ່ງກວາງນ້ອຍກະຫາຍທານ້ຳ
   ຊົງເປັນຄວາມປາຖນາ ແຫ່ງຈິດໃຈຂ້າທີ່ຢາກສັຣເສີນພຣະອົງ

* ຊົງເປັນໂລ້ທີ່ກຳບັງເຂັ້ມແຂງ ຊົງເປັນຜູ້ລ້ຽງທີ່ຂ້າຮັກເທີດທູນ
   ຊົງເປັນຄວາມປາຖນາ ແຫ່ງຈິດໃຈຂ້າທີ່ຢາກສັຣເສີນພຣະອົງ

## #11 ເລີ່ມໃຫ້ຖືກ

ເລີ່ມໃຫ້ຖືກຜູກພັນກັບອົງພຣະເຈົ້າ ທຸກວັນເວລາແລະຕະລອດໄປ (2 ເທື່ອ)
ຈົ່ງຮັກພຣະເຈົ້າດ້ວຍສິ້ນສຸດຈິດ ໃຫ້ພຣະອົງຊົງເປັນນຶ່ງໃນຊີວິດ
ແລະຮັກເພື່ອນບ້ານເໝືອນຮັກຕົນເອງ ຈົ່ງຮັກທຸກຄົນ
ຖ້າທ່ານໄດ້ຮັກແບບຢ່າງນີ້ໄວ້ແລ້ວ ຊີວິດທ່ານຈະເລີ່ມຖືກທາງ
ຈົ່ງຮັກສາຄວາມຮັກນີ້ໄວ້ ເພື່ອຊີວິດມີສຸກສືບໄປ

## #12 ຂ້າຮູ້ແນ່ພຣະຄຣິດຊົງພຣະຊົນຢູ່

ຂ້າຮູ້ແນ່ພຣະຄຣິດ ຊົງພຣະຊົນຢູ່ ຈິດຂ້າຂໍສັຣເສີນ
ບົນກາງແຂນ ພຣະອົງຊົງໄຖ່ບາບຂ້າ ຈິດຂ້າຂໍສັຣເສີນ
ອົງພຣະຄຣິດຊົງຣິດ ພິສິດຄວາມມໍຣະນາ ຈິດຂ້າຂໍສັຣເສີນ
ຂ້າຈຶ່ງມີເສຣີ ພົ້ນບ້ວງມານຊາຕານ ຈິດຂ້າຂໍສັຣເສີນ

# #13 ຊີວິດເຮົາພຣະເຈົ້າຊົງສ້າງ

1. ຊີວິດເຮົາພຣະເຈົ້າຊົງສ້າງ ເປັນຫົນທາງນຳເຮົາສູ່ສະວັນ
   ໂດຍພຣະນາມເຢຊູຊົງນຳ ສົມຄວນແລ້ວທ່ານ ສັນຣະເສີນໂມທະນາ
   ພຣະບິດາ ພຣະບຸດຕາ ພຣະວິນຍານອັນເລີດລ້ຳ
   ພອນພຣະອົງທີ່ຊົງປະທານ ພ້ອມພຣະວິນຍານຊົງປະທານຣິດເດຊາ

* ໃນພຣະນາມພຣະເຢຊູ ຊົງເອັນດູຊາວປະຊາ ຄວາມບາບທີ່ເຮົາເຄີຍທຳ
   ເປັນປະຈຳພຣະອົງຊົງໄຖ່ ແມຈະມີມົນທິນ ໄຜດູໝິ່ນກໍຊ່າງໃຜ ພຣະອົງຊົງໃຫ້
   ອະໄພພວກເຮົາ ຄວາມຊຶມເສົ້າຂອງເຮົາຫາຍໄປ

2. ຈະມີໃຜທີ່ໃດກັນເຈົ້າ ນຳພວກເຮົາປາຊາໃຫ້ລອດພົ້ນ
   ທຳຄວາມດີບໍ່ມີຈັກຄົນທີ່ຈະຊ່ອຍຕົນໃຫ້ຫລຸດພົ້ນຈາກຄວາມຕາຍ
   ບໍ່ມີວັນຈະຫລຸດຫາຍຈາກຄວາມຕາຍໄປໄດ້ເລີຍ
   ພຣະເຢຊູເປັນຜູ້ຊິດເຊີຍ ນ້ຳຄຳປຳເອີຍບໍ່ເຄີຍລືມພວກເຮົາ

# #14 ດວງໃຈເປຣມປຣີ

* ດວງໃຈເປຣມປຣີສນຸກຫລີດີເຮົາມາຮ້ອງເພງ ສັຣເສີນພຣະເຈົ້າ
   ສຸກອຸຣາຮ່ວມກັນບັນເລງ ຖວາຍສຽງເພງ ສນຸກຄື້ນເຄັງ ຮ່ວມກັນເຮຣາ

1. ຄວາມຮັກພຣະເຈົ້າແນ່ນອນ ບໍ່ຍ໊ອກຍ້ອນພຣະພອນປະດັບວິນຍານ
   ທຸກວັນທຸກຄືນ ຊື່ນອຸຣາ ສຸກຫັນສາພາລົ່ນລົມ

2. ຊີວິດມີສັນຕິສຸກ ບໍ່ມີທຸກ ບໍ່ມີຄວາມເສົ້າວິນຍານ
   ພຣະອົງປະທານ ຊື່ນວິນຍານ ຕະລອດມາພາຊື່ນຊົມ

## #15 ພຣະອົງຊົງສົມຄວນ

1. ວັນເວລາທີ່ປ່ຽນໄປ ພຣະອົງບໍ່ປ່ຽນແປງ
   ມີຄວາມຮັກແລະເມຕາຢູ່ສະເມີ
   ຕົວເຮົາອາດຈະຫວັ່ນໄຫວ ພຣະອົງຍັງເໝືອນເດີມ
   ເປັນພຣະເຈົ້າຂອງເຮົາຢູ່ເຫລື້ອຍໄປ

* ພຣະອົງຊົງສົມຄວນທີ່ຈະຮັບການສັນຣະເສີນ
   ພຣະອົງຊົງສົມຄວນທີ່ຈະຮັບການໂມທະນາ
   ເພາະພຣະອົງແສນດີ ແລະບໍ່ມີໃຜຈະເໝືອນ
   ພຣະອົງຊົງສົມຄວນທີ່ຈະຮັບການສັນຣະເສີນ

2. ວັນທີ່ແດດຈະແຜດເຜົາ ຊົງເປັນເງົາຮົ່ມເຢັນ
   ເປັນຄວາມຫວັງ ເປັນທາງລອດຢູ່ສະເມີ
   ຄືນແລະວັນທີ່ເໜັບໜາວ ພຣະອົງຢູ່ຂ້າງເຮົາ
   ເປັນພຣະເຈົ້າຂອງເຮົາຢູ່ເຫລື້ອຍໄປ

## #16 ມາສັຣເສີນພຣະຜູ້ເປັນເຈົ້າ

* ມາເຖີດມາສັຣເສີນພຣະຜູ້ເປັນເຈົ້າ (4 ເທື່ອ)

1. ອົງພຣະຄຣິດຜູ້ສະຖິດໃນຟ້າສະວັນ ໂປດປະທານຊີວິດນິຣັນແກ່ຂ້າ
   ອົງພຣະຄຣິດຜູ້ພິສິດຄວາມມໍຣະນາ ໂປດໃຫ້ຂ້າເຖິງສວັນອັນເປຣມປຣີ

2. ໃຕ້ດວງຈັນແລະດວງດາວສະກາວພາວແສງ ຊ່ວຍດັດແປງດິນແດນແຫ່ງນີ້
   ໃຫ້ລື່ນລົມ
   ໝູ່ແບກໄມ້ຫອມຫວນຊວນໃຫ້ຊື່ນຊົມ ເລົ້າອາຣົມໃຫ້ສຸກແສນແດນວິນຍານ

## #17 ກິ້ງອອກໄປ

1. ກິ້ງອອກໄປ ໆ ໆ ບັນດາພາລະໜັກໃນໃຈ ກິ້ງອອກໄປ
   ກິ້ງອອກໄປ ໆ ໆ ບັນດາພາລະໜັກໃນໃຈ ກິ້ງອອກໄປ
   ບົນກາງແຂນ ບຸດພຣະເຈົ້າ ຊົງເລືອດໄຫລ ເພື່ອໄຖ່ເຮົາ ຮາເລລູຢາ
   ກິ້ງອອກໄປ ໆ ໆ ບັນດາພາລະໜັກໃນໃຈ ກິ້ງອອກໄປ

2. ໂຢນອອກໄປ ໆ ໆ ບັນດາພາລະໜັກໃນໃຈ ໂຢນອອກໄປ
   ໂຢນອອກໄປ ໆ ໆ ບັນດາພາລະໜັກໃນໃຈ ໂຢນອອກໄປ
   ບົນກາງແຂນ ບຸດພຣະເຈົ້າ ຊົງເລືອດໄຫລ ເພື່ອໄຖ່ເຮົາ ຮາເລລູຢາ
   ໂຢນອອກໄປ ໆ ໆ ບັນດາພາລະໜັກໃນໃຈ ໂຢນອອກໄປ

## #18 ວັນນີ້ເປັນວັນທີ່ພຣະເຈົ້າຕັ້ງໄວ້

ວັນນີ້ເປັນວັນ (2 ເທື່ອ) ທີ່ພຣະເຈົ້າຕັ້ງໄວ້ (2 ເທື່ອ)
ຈົ່ງຊື່ນຊົມຍິນດີ (2 ເທື່ອ) ແລະຮ້ອງເພງສັຣເສີນ (2 ເທື່ອ)
ວັນນີ້ເປັນວັນທີ່ພຣະເຈົ້າຕັ້ງໄວ້ ຈົ່ງຊື່ນຊົມຍິນດີ ແລະຮ້ອງເພງສັຣເສີນ
ວັນນີ້ເປັນວັນ (2 ເທື່ອ) ທີ່ພຣະເຈົ້າຕັ້ງໄວ້

## #19 ດູປ່າໄມ້

ດູປ່າໄມ້ສີຂຽວກະຈີ ດູທ້ອງນາສີເຫລືອງອາລ່າມ
ເອີ໊ະ! ນັ້ນທະເລສີຄາມ ທັມມະຊາດຊ່າງງາມຍາມດູ
ຢາກຮູ້ວ່າໃຜສ້າງມາ ຂອບນໍ້າຈົ່ງງາມສົດໃສ
ບອກໃຫ້ກໍໄດ້ ພຣະບິດາຂອງເຮົານັ້ນເອງ

## #20 ຈັບມືກັນໄວ້

ຈັບມືກັນໄວ້ໃຫ້ໝັ້ນຄົງ ເພື່ອຄວາມຍືນຍົງສາມັກຄີ
ຮັກກັນປອງດອງເໝືອນນ້ອງພີ່ ປູກຄວາມສາມັກຄີມີຮ່ວມກັນ
ໂກດກັນມັນຮ້າຍເປັນສິ່ງເລວ ປຽບດັ່ງແປວເພີງຮ້ອນໄຟນັ້ນ
ເລົ້າໃຈໃຫ້ມີຄວາມໄຫວຫວັ່ນ ຈັບມືຍື່ນໃຫ້ກັນເປັນສິ່ງດີ

# #21 ເຮົາເປັນນຶ່ງໃນຄວາມຮັກພຣະຄຣິດ

1. ເຮົາເປັນນຶ່ງໃນຄວາມຮັກພຣະຄຣິດ ເຮົາເປັນຶ່ງໃນຄວາມຮັກພຣະຄຣິດ
   ວິນຍານຈິດເຮົາຜູກພັນກັບອົງພຣະວິນຍານ ເຮົາເປັນນຶ່ງໃນຄວາມຮັກ
   ພຣະຄຣິດ

2. ຂໍໃຫ້ເຮົາຮ່ວມຮ້ອງເພງສັຣເສີນ ເປີດດວງໃຈເພື່ອຕ້ອນຮັບພຣະເຈົ້າ
   ໃຫ້ເຮົາຈັບມືກັນແລະປະກາດໃຫ້ໂລກຮູ້ ເຮົາເປັນນຶ່ງໃນຄວາມຮັກພຣະຄຣິດ

# #22 ພຣະເຢຊູຊົງຮັກເຮົາ

1. ເຖິງເຮົາຈະເປັນຄົນບາບໜັກໜາ  ພຣະເຢຊູຊົງຮັກເຮົາ
   ເຖິງເຮົາທົນທຸກແລະທໍຣະມານ  ຊາຣາຫລືວ່າຍັ້ງເຢົາ

* ພຣະອົງຊົງຄອຍເຮົາຢູ່  ຊົງດູດ້ວຍຮັກມາກມາຍ
   ຂໍໂປຣດໃຫ້ກຳລັງ  ທຳຕາມນ້ຳພຣະທັຍ
   ຂໍໃຫ້ເຮົາຄອຍຢູ່  ຈົນເຮົາສິ້ນລົມຫາຍໃຈ (ຮູ ໆ ໆ ໆ)

2. ສອງມືເຮົາທຳງານຂອງພຣະອົງ  ແລະໃຈຂອງເຮົາໝັ້ນຄົງ
   ສອງຕາເຮົາເຫັນກາງແຂນໂສພາ  ເຊື່ອຈະບໍ່ລື້ມລົງ

# #23 ຂອບຄຸນພຣະເຢຊູ

ຂອບຄຸນພຣະເຢຊູ  ມອບຄວາມຮັກແກ່ເຮົາ
ຂອບຄຸນພຣະເຢຊູ  ຊົງພຣະຄຸນມາກມີ
ເຮົາເປັ່ງສຽງຮ້ອງ  ສັຣເສີນພຣະນາມ
ຮ້ອງສັຣເສີນໂມທະນາ  ພຣະອົງເປັນທຸກສິ່ງ ເປັນພຣະເຈົ້າຂອງເຮົາ

# #24 ທັມມະຊາດແສນງາມ

ນັ້ນທະເລແສນງາມ ຟ້າສີຄາມສົດໃສ ມອງເຫັນເຮືອໃບ ແລ່ນຢູ່ໃນທະເລ
ເບິ່ງຫາດຊາຍເຫັນປູ ດູຊິດູໝູ່ປາ ກຸ້ງຫອຍນານາ ຢູ່ໃນທ້ອງທະເລ
ນັ້ນແຫລະຝີພຣະຫັດ ພຣະເຈົ້າຊົງສ້າງໄວ້ ໃຫ້ເຮົາຊື່ນໃຈ ຍາມເມື່ອໄດ້ຊື່ນຊົມ

## #25 ເຊີນທ່ານທັງຫລາຍ

1. ເຊີນທ່ານທັງຫລາຍ ທັງຍິງທັງຊາຍເຂົ້າມາເທີນ
   ດື່ມນ້ຳທີ່ປະເສີດ ບໍ່ເສັຍອັນໃດ
   ຖ້າຜູ້ໃດເຄີຍມີຄວາມຫິວ ໃຫ້ຜູ້ນັ້ນຈິ່ງຮັບປະທານ
   ນ້ຳຝ່າຍວິນຍານ ຈາກອົງພຣະເຢຊູແຕ່ຜູ້ດຽວ

2. ເຊີນຜູ້ລຳບາກ ທຸກຍາກທັງຫລາຍໃຫ້ຮີບມາ
   ເຊີນເຫລົ່າປະຊາຊົນ ເຊົາເມື່ອຍສຳບາຍ
   ຖ້າຜູ້ໃດໃຈອ່ອນສຸພາບ ໃຫ້ຮຽນຮູ້ຈາກພຣະເຢຊູ
   ຜູ້ຊົງເປັນຄຣູ ແລະຊົງເປັນຜູ້ໄຖ່ບາບຂອງເຮົາ

3. ຄວາມສຸກສະຫວັນ ພຣະເຈົ້າປະທານແກ່ຜູ້ເຊື່ອ
   ຄວາມສຸກນີ້ຢູ່ເໜືອ ຄວາມສຸກໃດໃດ
   ຖ້າຜູ້ໃດເຄີຍມີຄວາມຫິວ ໃຫ້ຜູ້ນັ້ນຈິ່ງຮີບເຂົ້າມາ
   ດ້ວຍຄວາມສັດທາ ທູນຂໍຈາກອົງພຣະເຢຊູເຈົ້າ

4. ເຊີນຜູ້ທຸກຍາກ ລຳບາກທັງຫລາຍຮັບອາຫານ
   ເຊີນມາຮັບປະທານ ບໍ່ເສັຍເງິນທອງ
   ເຫດອັນໃດຈຶ່ງຈ່າຍເງິນທອງ ຊື້ສິ່ງຂອງທີ່ບໍ່ອີ່ມໃຈ
   ແຕ່ວ່າດຽວນີ້ ພຣະເຈົ້າຊົງປະທານຂອງຢ່າງດີ

## #26 ຈະຢູ່ເປັນສຸກ

ຈະຢູ່ເປັນສຸກບໍ່ຕ້ອງມີທຸກລືທົມ ຊີວິດຊື່ນຊົມລົ້ນລົມຕະລອດເວລາ
ມີຄວາມຫວັງໃໝ່ສົດໃສດັ່ງດວງຈັນທາ ຢູ່ກາງເວຫາໃຫ້ຄວາມສວ່າງສໄຫວ
ບໍ່ຕ້ອງຮ້ອງໄຫ້ບໍ່ຕ້ອງສູນເສັຽນ້ຳຕາ ຊີວິດມາຄ່າເພາະມີພຣະເຈົ້ານຳພາ
ມີສັນຕິສຸກເຫລືອລົ້ນຢູ່ໃນດວງໃຈ ຈິ່ງມອບໃຈໄວ້ໃນອົງພຣະເຢຊູ

## #27 ຄອຍເຝົ້າຄອຍ

1. ຄອຍເຝົ້າຄອຍພຣະຄຣິດສກັບມາ ເຊີນທ່າຫວນມາຊ່ອຍປະຊາໃຫ້ລອດພົ້ນໄພ
   ບາບກຳທີ່ພວກເຮົາສ້າງກໍ່ໄວ້ ພຣະອົງເພິ່ນຊົງຊ່ອຍໄດ້ ໃຫ້ພວກເຮົານັ້ນສິ້ນໄປ

2. ວັນແລະຄືນເຝົ້າລໍຄອຍຫາ ຜູ້ທ່ານເມຕາປະທານເສັ້ນທາງທີ່ດີ ຊາດນີ້ພວກ
   ເຮົາເຫັນແລ້ວຄວາມຈິງ ພຣະອົງເປັນທີ່ພັກພິງ ຊ່ອຍນຳພາເຮົາພົ້ນຈາກມານ

* ເພາະພຣະອົງເພິ່ນສອນສັ່ງໃຫ້ ພົບຊີວິດໃໝ່ໃນພຣະອົງທີ່ໄດ້ປະທານ
   ແກ່ທຸກຊົນຊາດພຣະບິດາເພິ່ນໄດ້ສິງສາມ ຂາຂໍຫົນທໍລະມານ ເຖິງວັນທ່ານຈະ
   ຫວນຄືນມາ

3. ເຊີນພີ່ນ້ອງຊາວລາວທັງຫລາຍ ຈົ່ງຮີບຕຽມໃຈຮັບເອົາພຣະຄຣິດສໃຫ້ໄປ
   ເພື່ອນຳເຮົາໄປບົນຟ້າສະວັນ ໄດ້ຮັບຄວາມສຸກນິຣັນ ສຸກສຳລານຊົ່ວນິຣັນດອນ

## #28 ໄຟ ໄຟ ໄຟ

* ໄຟ ໄຟ ໄຟ ຂອງອົງພຣະເຈົ້າ ລອຍລົງມາເໜືອພວກເຮົາ
   ຄຣິດສະຕຽນບໍ່ຄວນໂສກເສົ້າ ມາພວກເຮົາມາຮ້ອງເພງ

1. ຂໍອົງພຣະເຢຊູເຈົ້າປະທານໄຟລົງມາ
   ຂໍອົງພຣະເຢຊູເຈົ້າປະທານໄຟໃນໃຈຂ້າ

2. ສັນຣເສີນພຣະເຢຊູເຈົ້າປະທານໄຟລົງມາ
   ສັນຣເສີນພຣະເຢຊູເຈົ້າປະທານໄຟໃນໃຈຂ້າ

## #29 ຂ້າຮັບການໄຖ່

ຂ້າຮັບການໄຖ່ ດ້ວຍພຣະໂລຫິດ ຂ້າຮັບການໄຖ່ ຂ້າຮູ້ແກ່ໃຈ
ຂ້າຮັບການໄຖ່ດ້ວຍພຣະໂລຫິດ ລຸດຈາກບາບເຂົ້າສູ່ຊີວິດ
ບາບຂອງຂ້າຖືກຍົກເລີກແລ້ວ ສັຣເສີນພຣະເຈົ້າ

# #30 ພີ່ນ້ອງທັງຫລາຍ

1. ພີ່ນ້ອງທັງຫລາຍຈົ່ງມີຄວາມສຸກສຳລານໃນພຣະເຈົ້າ ( 2 ເທື່ອ)
2. ເພາະວ່າຄວາມສຸກນັ້ນພຣະເຈົ້າໄດ້ປະທານໃຫ້ແກ່ເຮົາ( 2 ເທື່ອ)
3. ຈົ່ງສັນລະເສີນຄວາມດີທີ່ພຣະອົງຜູ້ໄດ້ໂຜດໃຫ້ ( 2 ເທື່ອ)
4. ຄອບຄຸນພຣະອົງຜູ້ມີຄວາມຮັກ ຄອບຄຸນອັນຫຍິ່ງໃຫຍ່ ( 2 ເທື່ອ)

# #31 ພຣະເຈົ້າຜູ້ຊົງສ້າງ

1. ພຣະເຈົ້າຜູ້ຊົງສ້າງ ແຜ່ນດິນໂລກແລະເມືອງຟ້າ
   ພຣະນາມເຢໂຮວາ ອົງພຣະຄຣິດພຣະເຢຊູ
   ຊົງຮັກໂລກທີ່ສຸດ ໄດ້ສົ່ງພຣະບຸດມາຢູ່
   ຊ່ອຍມະນຸດຄືນບາບ ໃຫ້ໂອກາດໄປສະວັນ

2. ຊົງຊ່ອຍບໍ່ວ່າໃຜ ລາວໄທຍ ຈີນ ຫລືຂະເມນ
   ພະມ້າແລະວຽດນາມ ຄົນອະທັມທົ່ວໂລກາ
   ແຕ່ກ່ອນຂ້ານ້ອຍເຄີຍ ຄຶດເຮັດແນວຜິດໜັກໜາ
   ວ່າອົງພຣະເຢຊູ ຊົງເມດຕາແຕ່ຝະຣັ່ງ

3. ຖ້າໃຜຍັງບໍ່ເຊື່ອ ຢ່າເພິ່ງເບື່ອຈົ່ງເອົາຄຳ
   ພີອ່ານຄຳສັ່ງສອນ ຢ່າໃຫ້ພາດຊີວິດອັນ
   ດີອ່ານໃຫ້ຖ້ວນທີ່ ຄຳພີນີ້ມອຳນາດ
   ພຣະເຈົ້າປະທານມາ ໃຫ້ຄວາມລອດແກ່ພວກເຮົາ

# #32 ຈົ່ງສະແຫວງຫາແຜ່ນດິນຂອງພຣະເຈົ້າ

ຈົ່ງສະແຫວງຫາແຜ່ນດິນຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງກ່ອນ
ແລ້ວພຣະຈະຊົງເພີ່ມເຕີມສິ່ງທັງປວງໃຫ້ ຮາເລລູຢາ ຮາເລລູຢາ ໆ ໆ
ຮາເລລູຢາ ຮາເລລູ ຮາເລລູຢາ

# #33 ໂລກເຮົາ

1. ໂລກເຮົາທຸກມື້ທຸກວັນ ຕີກັນຂ້າຟັກັນຕາຍ
   ຊົ່ວຊ້າທັງຫຍິງແລະຊາຍ ມີຫຼາຍສະພາບບາບກຳ

2. ໂກບໂກຍຊັບສິນເງິນຕາ ໄດ້ມາບໍ່ອີ່ມບໍ່ໜຳ
   ຊົ່ວຊ້າໃຈມືດໃຈດຳ ມັກທຳແຕ່ຂອງບໍ່ດີ

* ຈົ່ງມາຄຶດກ່ອນຄຶດກ່ອນສາເດີນ້ອງພີ່ ຄຶດໃຫ້ດີໆໂລກນີ້ມັນບໍ່ແນ່ອີ່ຫຍັງ
   ຈົ່ງມາຮັບເອົາຮັບເອົາພຣະເຈົ້າສູງຊົ່ງ ເຊື່ອໃພຣະອົງພຣະອົງພາຂຶ້ນສວັນ

3. ສຸກໃຈສຸກສົມຫຼືດີ ເມື່ອມີຊີວິດອີ່ມໜຳ
   ໂລກີ້ມັນບໍ່ແນ່ອີ້ຫຍັງ ພາດພັ້ງຊີວິດໝອງມົວ

# #34 ລາກ່ອນ

1. ລາກ່ອນໃນວັນນີ້ ຂໍຈົ່ງມີສຸກຂີລາກ່ອນ ພຣະເຈົ້າຊົງອວຍພຣະພອນ (2 ເທື່ອ)
   ຂໍລາກ່ອນຈຳໃຈຈອນຈາກກັນ

2. ວັນນັ້ນກັບວັນນີ ປ່ຽນແຕ່ປີສາມະຄີຍັງຢູ່ ເໝືອນກັບອົງພຣະເຢຊູ (2 ເທື່ອ)
   ຮັກເຮົາຢູ່ບໍ່ຮູ້ຍັງຫາຍ

3. ລາແລ້ວລາໄປ ຮ່າງແຕ່ກາຍຍັງຄິດເຫັນໜ້າ ຂໍອົງພຣະເຈົ້າຮັກສາ (2 ເທື່ອ)
   ຊົງນຳພາເຮົາຢູ່ຕະຣອດໄປ
   ລາແລ້ວພີ່ນ້ອງເອີຍ!